# ບົດຖະແຫຼງຂ່າວ

# ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດ ຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19

## ປະຈຳວັນອາທິດ ວັນທີ 5 ກັນຍາ ປີ 2021

ສະບາຍດີ ບັນດາທ່ານທີ່ກຳລັງຕິດຕາມຮັບຊົມ ແລະ ຮັບຟັງ ການຖ່າຍທອດສົດ ການຖະແຫຼງຂ່າວຂອງຄະນະສະເພາະກິດ **ປະຈຳວັນອາທິດ ວັນທີ 5 ກັນຍາ ປີ 2021**.

- ຂ້າພະເຈົ້າ ດຣ. ສີສະຫວາດ ສຸດທານີລະໄຊ ຮອງຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ ຈະຖະແຫຼງຂ່າວ ກ່ຽວກັບ ສະພາບໂຄວິດ-19 ຢູ່ໃນ ສປປ ລາວ, ໃນໂລກ ແລະ ບາງຂໍ້ແນະນຳເພີ່ມເຕີມ

ພ້ອມດ້ວຍ ທ່ານ ຖະໜອງ ທຳທອງ, ຄະນະປະຈຳພັກນະຄອນຫຼວງ, ປະທານແນວລາວສ້າງ

ຊາດ ຈະມາຖະແຫຼງຂ່າວກ່ຽວກັບ ມາດຕະການທີ່ຈະຕ້ອງປະຕິບັດໃນງານບຸນຫໍ່ເຂົ້າປະດັບດິນ.

**ຕໍ່ໄປ ຂ້າພະເຈົ້າ ຂໍລາຍງານ:**

- **ສະພາບການລະບາດພະຍາດໂຄວິດ-19 ຢູ່ ສປປ ລາວ, ມາຮອດວັນທີ 4 ກັນຍາ 2021:**

  ໄດ້ກວດວິເຄາະທັງໝົດ **3,093** ຄົນ, ໃນນັ້ນ ກວດພົບຜູ້ຕິດເຊື້ອໃໝ່ ທັງໝົດ **172** ຄົນ ເຊິ່ງ**ຕິດເຊື້ອໃນຊຸມຊົນ 56 ຄົນ** ເປັນຜູ້ສຳຜັດໃກ້ຊິດນຳຜູ້ຕິດເຊື້ອທີ່ຜ່ານມາ ແລະ **ກໍລະນີນຳເຂົ້າ ມີ 116 ຄົນ** ຈາກ ສະຫວັນນະເຂດ 68 ຄົນ, ສາລະວັນ 14 ຄົນ, ນະຄອນຫຼວງວຽງຈັນ 13 ຄົນ, ຈຳປາສັກ 12 ຄົນ, ຄຳມ່ວນ 5 ຄົນ, ແລະ ບໍລິຄຳໄຊ 4 ຄົນ ເຊິ່ງກວດພົບ

ຈາກແຮງງານລາວ ຫຼື ຜູ້ທີ່ເດີນທາງມາຈາກປະເທດເພື່ອນບ້ານ ເຂົ້າຕາມຈຸດຜ່ານແດນສາກົນ.

**ລາຍລະອຽດ ຜູ້ຕິດເຊື້ອໃນຊຸມຊົນ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງແມ່ນເປັນຜູ້ສໍາຜັດໃກ້ຊິດກັບຜູ້ຕິດເຊື້ອທີ່ຜ່ານມາ ລາຍລະອຽດດັ່ງນີ້:**

- **ສະຫວັນນະເຂດ 21 ຄົນ**
- **ຈໍາປາສັກ 13 ຄົນ**
- **ຄໍາມ່ວນ 7 ຄົນ**: ທັງໝົດແມ່ນ ພະນັກງານ ປກສ ຢູ່ຄ້າຍຄຸມຂັງ, ບ້ານຄໍາຂີ້ໄກ່.
- **ຫຼວງນໍ້າທາ 5 ຄົນ**
- **ສາລະວັນ 2 ຄົນ**: ຄົນໃນຄອບຄົວດຽວກັນ (ຜົວ ແລະ ເມຍຕິດເຊື້ອ ເປັນພະນັກງານທັງສອງຄົນ)

- **ບໍ່ແກ້ວ 2 ຄົນ:** ບ້ານຂຸນບົງ ມີປະຫວັດພົວພັນ ກັບບ້ານໃໝ່ສີເມືອງງາມ

- **ນະຄອນຫຼວງວຽງຈັນ 6 ຄົນ (ຄົນໃນຄອບຄົວດຽວກັນ):**

  1. ເພດຊາຍ, ອາຍຸ 24 ປີ, ບ້ານ ຫາດຊາຍຂາວ, ເມືອງຫາດຊາຍຟອງ, ອາຊີບ ພະນັກງານທະຫານ (ໂພນເຄັງ)
     - ຄົນໃນຄອບຄົວຕິດເຊື້ອ
     - ສັກຢາວັກຊີນຄົບ 2 ເຂັມ
  2. ເພດຊາຍ , ອາຍຸ 52 ປີ, ບ້ານ ຫາດຊາຍຂາວ, ເມືອງ ຫາດຊາຍຟອງ ອາຊີບ: ພະນັກງານທະຫານ (ໂພນເຄັງ)
     - ຄົນໃນຄອບຄົວຜູ້ຕິດເຊື້ອ
     - ໄດ້ສັກຢາວັນຊີນ 2 ເຂັມ
     - ພະຍາດປະຈຳໂຕ: ເບົາຫວານ ແລະ ຄວາມດັນເລືອດສູງ

**3.** ເພດຍິງ, ອາຍຸ 19 ປີ, ບ້ານຫາດຊາຍຂາວ ເມືອງຫາດຊາຍຟອງ, ອາຊີບ ຂາຍເຄື່ອງ Online

- ຄົນໃນຄອບຄົວຕິດເຊື້ອ
- ບໍ່ມີພະຍາດປະຈຳໂຕ ແລະ ຍັງບໍ່ໄດ້ສັກຢາວັນຊີນ

**4.** ເພດຊາຍ, ເດັກອາຍຸ 8 ເດືອນ ບ້ານຫາດຊາຍຂາວ ເມືອງຫາດຊາຍຟອງ

- ຄົນໃນຄອບຄົວຕິດເຊື້ອ
- ມີອາການວັນທີ 2/9: ໄຂ້, ນ້ຳມູກຍ້ອຍ

**5.** ເພດຍິງ , ອາຍຸ 52 ປີ ບ້ານຫາດຊາຍຂາວ ເມືອງຫາດຊາຍຟອງ

ອາຊີບ: ພະນັກງານທະຫານ (ໂພນເຄັງ)

- ຄົນໃນຄອບຄົວຕິດເຊື້ອ
- ພະຍາດປະຈຳໂຕ: ເບົາຫວານ
- ໄດ້ສັກຢາວັນຊີນ 2 ເຂັມ

**6.** ເພດຊາຍ, ອາຍຸ 18 ປີ, ບ້ານຫາດຊາຍຂາວ, ເມືອງຫາດຊາຍຟອງ

ອາຊີບ ນັກຮຽນ

- ຄົນໃນຄອບຄົວຕິດເຊື້ອ
- ບໍ່ມີພະຍາດປະຈຳໂຕ
- ສັກຢາວັກຊີນ 2 ເຂັມ

❖ **ສະຖານທີ່ສ່ຽງ ທີ່ຜູ້ຕິດເຊື້ອໄດ້ເດີນທາງໄປໃນນະຄອນຫຼວງ:**

- **ວັນທີ 31/8:**
  - ຮ້ານມ່າລ່າ ແຖວຊ້າງເຜືອກ
  - ຮ້ານຕັດຜົມຕໍ່ໜ້າບໍລິສັດ ສະກາຍ
  - ວັດທ່າແຂກ ເມືອງຫາດຊາຍຟອງ
  - ຮ້ານເສີມສວຍ ດອນນົກຂຸ້ມ
- **ວັນທີ 1/9:**

- ຕະຫຼາດໜອງໄຮ

- **ວັນທີ 2/9:**
  - ຮ້ານ J-mark ສາຂາທາດຫຼວງ
  - ຮ້ານ 365 ຢູ່ຫຼັກ 8
- **ວັນທີ 3/9:**
  - ຮ້ານອາຫານ ຊັ້ນ 6 ຢູ່ໄອເຕັກ

➢ ປະຈຸບັນ ຜູ້ຕິດເຊື້ອໃໝ່ທັງໝົດ ໄດ້ເຂົ້ານອນແຍກປ່ຽວ ແລະ ຮັບການປິ່ນປົວຢູ່ສະຖານທີ່ປິ່ນປົວທີ່ຖືກກຳນົດໄວ້.

➢ ມາຮອດມື້ນີ້ ພວກເຮົາມີຕົວເລກຜູ້ຕິດເຊື້ອສະສົມທັງໝົດ **15,933 ຄົນ**, ເສຍຊີວິດສະສົມ **16** ຄົນ ແລະ ຄົນເຈັບກຳລັງປິ່ນປົວ ທັງໝົດ **5,464** ຄົນ.

➢ **ສຳລັບ ບ້ານແດງທີ່ຖືກກຳນົດເປັນບ້ານແດງໃໝ່ໃນນະຄອນຫຼວງວຽງຈັນ ມີ 1 ບ້ານຄື: ບ້ານຫາດຊາຍຂາວ, ເມືອງຫາດຊາຍຟອງ**

- ຜູ້ທີ່ມີຈຸດປະສົງຢາກກວດຊອກຫາເຊື້ອໂຄວິດ-19 ສຳລັບ ນະຄອນຫຼວງວຽງຈັນນີ້ ແມ່ນ ຢູ່**ຈຸດເກັບຕົວຢ່າງບຶງຂະຫຍອງ** ເຊິ່ງເປີດໃຫ້ບໍລິການບັນດາທ່ານທຸກວັນ (ວັນຈັນ ຫາ ວັນອາທິດ) ໃນຕອນເຊົ້າ ເວລາ 9:00-12:00 ໂມງ ແລະ ຍັງມີທີມງານເກັບຕົວຢ່າງເຄື່ອນທີ່ໄປເກັບໃນສະຖານທີ່ທີ່ມີລາຍງານຄົນເຈັບຕິດເຊື້ອ.
- ສຳລັບແຂວງ ແມ່ນທ່ານສາມາດໄປກວດຊອກຫາເຊື້ອໄດ້ຢູ່ໂຮງໝໍແຂວງ ຫຼື ສະຖານທີ່ທີ່ກຳນົດໄວ້.

## ➢ ການເຝົ້າລະວັງຢູ່ຕາມຈຸດຜ່ານແດນ ໃນຂອບເຂດທົ່ວປະເທດ

- ວັນທີ 4 ກັນຍາ 2021 ມີຜູ້ເດີນທາງຜ່ານເຂົ້າມາດ່ານຕ່າງໆໃນ ສປປ ລາວ ຈຳນວນ ທັງໝົດ **1,872** ຄົນ.
- ປັດຈຸບັນ ທົ່ວປະເທດມີສູນຈຳກັດບໍລິເວນທີ່ຍັງເປີດຢູ່ **90** ສູນ ແລະ **54** ໂຮງແຮມ , ມີຜູ້ຈຳກັດບໍລິເວນ **8,144** ຄົນ.

## ➢ ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບການຕິດເຊື້ອໃນທົ່ວໂລກ:

- ປັດຈຸບັນ ທົ່ວໂລກມີລາຍງານຜູ້ຕິດເຊື້ອສະສົມທັງໝົດ **221.073.029** (488.429 ໃໝ່), ເສຍຊີວິດທັງໝົດ **4.574.376** (8.256 ໃໝ່), ປິ່ນປົວຫາຍ

ດີ **197.562.639** (481.127 ໃໝ່). ສຳລັບ 3 ອັນດັບ ປະເທດທີ່ມີຜູ້ຕິດເຊື້ອ ແລະ ເສຍຊີວິດຫຼາຍກວ່າໝູ່ໃນໂລກ ກໍ່ຍັງແມ່ນ ສະຫະລັດອາເມລິກາ, ອິນເດຍ ແລະ ບຣາຊິວ.

- **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ**

 - ປະເທດ ໄທ ມີຜູ້ຕິດເຊື້ອ 15,942 ແລະ ເສຍຊີວິດໃນມື້ດຽວ 257 ຄົນ, ຮອງລົງມາ ແມ່ນ ຫວຽດນາມມີລາຍງານຜູ້ຕິດເຊື້ອໃໝ່ປະຈຳວັນ 9,566 ຄົນ ແລະ ເສຍຊີວິດໃນມື້ດຽວ 347 ຄົນ.

**ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ**

- ສະຖານະການ ການລະບາດຂອງພະຍາດນີ້ທັງໃນທົ່ວໂລກ ແລະ ໃນປະເທດເຮົາ ຍັງໜ້າເປັນຫ່ວງ, ຕົວເລກການຕິດເຊື້ອໃນຊຸມຊົນ ໃນ ສປປລາວ ໄດ້ເພີ້ມຂຶ້ນຢ່າງຕໍ່ເນື່ອງ, ການຕິດເຊື້ອນີ້ແມ່ນເກີດຂຶ້ນໃນຫຼາຍສາຂາອາຊີບ ທັງພະນັກງານດ່ານໜ້າ, ພະນັກງານລັດຖະກອນ, ບໍລິສັດເອກະຊົນ, ອົງການຈັດຕັ້ງ, ຊາວຄ້າຂາຍ ແລະ ອື່ນໆ;
- ເພື່ອຫຼີກລ້ຽງ ແລະ ຕັດວົງຈອນ ຂອງພະຍາດ ພວກເຮົາທຸກຄົນ ແມ່ນຕ້ອງ ພ້ອມໃຈກັນປະຕິບັດຕາມແຈ້ງການສະບັບເລກທີ 1094/ຫສນຍ, ລົງວັນທີ 31 ສິງຫາ 2021, ຄຳສັ່ງຂອງເຈົ້າຄອງນະຄອນຫຼວງ ສະບັບເລກທີ 015/ຈນວ, ລົງວັນທີ 30 ສິງຫາ 2021 ແລະ ແຈ້ງການ ຂອງແນວລາວສ້າງຊາດ ນະຄອນຫຼວງວຽງຈັນ ສະບັບເລກທີ 378/ນຊ.ນວ, ລົງວັນທີ 3 ກັນຍາ 2021, ແຈ້ງການ ແລະ ຄຳສັ່ງທັງໝົດທີ່ໄດ້ວາງອອກ ເພື່ອສະກັດກັ້ນການ

ຕິດເຊື້ອ ບໍ່ໃຫ້ແຜ່ລະບາດເປັນວົງກວ້າງໃນຊຸມຊົນ. ສະນັ້ນ ອີກເທື່ອນຶ່ງ **ໃນງານບຸນປະເພນີບຸນຫໍ່ເຂົ້າປະດັບດິນ ທີ່ຈະມາເຖິງໃນວັນຈັນ ວັນທີ 6 ກັນຍາ ນີ້ ແມ່ນ ຫ້າມໃສ່ບາດ ແລະ ວຽນທຽນ ຕໍ່ໄປ ຂ້າພະເຈົ້າ ຈະຂໍອ່ານແຈ້ງການ ຂອງແນວລາວສ້າງຊາດ ນະຄອນຫຼວງວຽງຈັນ ສະບັບເລກທີ 378/ນຊ.ນວ, ລົງວັນທີ 3 ກັນຍາ 2021** ດັ່ງຕໍ່ໄປນີ້: ....................;

- ຂໍຮຽກຮ້ອງມາຍັງ ພໍ່ແມ່, ພີ່ນ້ອງ, ປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ ຈົ່ງພ້ອມໃຈກັນປະຕິບັດການດຳລົງຊີວິດປົກກະຕິແບບໃໝ່ (new normal) ເປັນຕົ້ນ ຫຼີກເວັ້ນການເດີນທາງໄປສະຖານທີ່ສ່ຽງ, ສະຖານທີ່ແອອັດ, ຮັກສາໄລຍະຫ່າງ, ໃສ່ຜ້າອັດປາກ-ດັງ, ລ້າງມືເລື້ອຍໆດ້ວຍນ້ຳສະອາດໃສ່ສະບູ ຫຼື ເຈວລ້າງມືທີ່ມີທາດເຫຼົ້າ 70% ຂຶ້ນໄປ, ຮັກສາມາລະຍາດໃນການໄອ-ຈາມ, ອະນາໄມຂ້າເຊື້ອຈຸດສ່ຽງ ແລະ ຫ້າມຊຸມແຊວກັນເປັນກຸ່ມ;

- ພວກເຮົາທຸກຄົນ ຕ້ອງຮ່ວມແຮງຮ່ວມໃຈ ແລະ ສາມັກຄີກັນ, ເພື່ອພ້ອມກັນຜ່ານຜ່າວິກິດນີ້ ໄປດ້ວຍກັນ ແລະ ສາມາດກັບມາດຳລົງຊີວິດປົກກະຕິໂດຍໄວ.

**ມາຮອດນີ້ ການລາຍງານສະພາບພະຍາດ ໂຄວິດ-19 ປະຈຳວັນ ອາທິດ ວັນທີ 5 ກັນຍາ ປີ 2021 ຂອງຂ້າພະເຈົ້າ ໄດ້ສິ້ນສຸດພຽງເທົ່ານີ້. ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານທີ່ ຕິດຕາມຊົມ ແລະ ຮັບຟັງ (ຂອບໃຈ)**